ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ຫ້ອງການ

ເລກທີ 1912 /ຫອຄ.ກຄພບ
ນະຄອນຫຼວງວຽງຈັນ, ວັນທີ 13 ສິງຫາ 2018

# ແຈ້ງການ

**ເຖິງ: ພະແນກ ອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ. ໃນຂອບເຂດທົ່ວປະເທດ.**

**ເລື່ອງ: ເອົາໃຈໃສ່ໂຄສະນາເຜີຍແຜ່ວຽກງານປົກປ້ອງຜູ້ຊົມໃຊ້ ແລະ ລົງຕິດຕາມກວດກາ ສິນຄ້າອຸປະໂພກ ບໍລິໂພກ ທີ່ໝົດອາຍຸ ເສຍຄຸນ.**

- ອີງຕາມ ກົດໝາຍ ວ່າດ້ວຍການປົກປ້ອງຜູ້ຊົມໃຊ້ ເລກທີ 02/ສພຊ, ລົງວັນທີ 30 ມິຖຸນາ 2010;
- ອີງຕາມ ການຕິດຕາມສະພາບການສະໜອງສິນຄ້າ ອຸປະໂພກ ບໍລິໂພກໃນທົ່ວສັງຄົມ ໃນໄລຍະຕົ້ນປີ 2018 ທີ່ຜ່ານມາ.

ໃນຊ່ວງໄລຍະຕົ້ນເດືອນ ມິຖຸນາ ປີ 2018 ໄດ້ມີຝົນຕົກໜັກຫຼາຍ ເຮັດໃຫ້ເກີດນໍ້າຖ້ວມຢູ່ຫຼາຍແຂວງ ເປັນຕົ້ນ ແຂວງອຸດົມໄຊ, ຄຳມ່ວນ, ສະຫວັນນະເຂດ, ຈຳປາສັກ ແລະ ເມືອງສະໜາມໄຊ ແຂວງອັດຕະປື ຊຶ່ງເປັນເຂດປະສົບກັບໄພນໍ້າຖ້ວມ ທີ່ຮ້າຍແຮງກວ່າໝູ່ ເຮັດໃຫ້ປະຊາຊົນ 06 ບ້ານ ບໍ່ມີທີ່ຢູ່ອາໄສ. ເຫດການດັ່ງກ່າວໄດ້ເຮັດໃຫ້ປວງຊົນລາວ, ອົງການຈັດຕັ້ງສາກົນ ແລະ ຕ່າງປະເທດ ໄດ້ໃຫ້ການຊ່ວຍເຫຼືອ ທັງວັດຖຸ ແລະ ຈິດໃຈ ໂດຍສະເພາະ ການບໍລິຈາກຊ່ວຍເຫຼືອເຄື່ອງອຸປະໂພກ ບໍລິໂພກ ເປັນຈຳນວນຫຼວງຫຼາຍ ໃນຄະນະດຽວກັນ ກໍມີກຸ່ມທຸລະກິດຫົວໃສຈຳນວນໜຶ່ງ ໄດ້ເອົາສິນຄ້າໝົດອາຍຸ ເຊື່ອມເສຍຄຸນມາບໍລິຈາກ ເພື່ອຫວັງຜົນຈາກສັງຄົມໂດຍບໍ່ຄຳນຶງເຖິງຜູ້ຊົມໃຊ້ ພ້ອມທັງຖືເອົາບ່ອນຮັບບໍລິຈາກເປັນບ່ອນຖິ້ມຂີ້ເຫຍື້ອ.

ດັ່ງນັ້ນ, ໃນນາມຂະແໜງອຸດສາຫະກຳ ແລະ ການຄ້າ ເປັນຜູ້ຮັບຜິດຊອບຕິດຕາມກວດກາ ທັງເປັນໃຈກາງການປະສານງານ ກັບຂະແໜງການທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການປົກປ້ອງຜູ້ຊົມໃຊ້, ຫ້ອງການ, ກະ ຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງການມາຍັງ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ໃນຂອບເຂດທົ່ວປະເທດ ດັ່ງນີ້:

**ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ:**

1. ປະສານ ຫຼື ລົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ເອົາໃຈໃສ່ ແລະ ເພີ່ມທະວີການໂຄສະນາເຜີຍແຜ່ວຽກງານປົກປ້ອງຜູ້ຊົມໃຊ້ ໃຫ້ມີລັກສະນະກວ້າງຂວາງຜ່ານສື່ສິ່ງພິມ, ສື່ເອເລັກໂຕຣນິກ ຫຼື ຜ່ານການຈັດການສຳມະນາ ຢູ່ຕາມສະຖານທີ່ຕ່າງໆ ເປັນຕົ້ນ ອົງການຈັດຕັ້ງລັດ, ເອກະຊົນ, ເຂດປະສົບໄພນ້ຳຖ້ວມ, ສະຖາບັນການສຶກສາ, ໂຮງໝໍ, ໂຮງຈັກໂຮງງານ, ຕະຫຼາດ ແລະ ອື່ນໆ;
2. ຊີ້ນຳຂະແໜງການຄ້າພາຍໃນ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ໂດຍສະເພາະ ເຈົ້າໜ້າທີ່ປົກປ້ອງຜູ້ຊົມໃຊ້ ແລະ ກວດກາການຄ້າ ເອົາໃຈໃສ່ລົງຕິດຕາມກວດກາ ສິນຄ້າອຸປະໂພກ ບໍລິໂພກ ທີ່ໝົດອາຍຸ ເສຍຄຸນ ລອກຮຽນແບບ ຫຼື ປອມແປງ ລວມທັງການຕິດສະຫຼາກສິນຄ້າເປັນພາສາລາວ ແລະ ການຕິດປ້າຍລາຄາສິນຄ້າ ຢູ່ຕາມສະຖານທີ່ຕ່າງໆ ໂດຍສະເພາະ ການລົງກວດກາຢູ່ຕາມສະຖານທີ່ເຂດປະສົບໄພນ້ຳຖ້ວມ ຊຶ່ງອາດມີການບໍລິຈາກສິນຄ້າ ທີ່ໝົດອາຍຸ ແລະ ເສຍຄຸນ ທີ່ກຸ່ມຄົນບໍ່ດີຫວັງເອົາສະຖານທີ່ດັ່ງກ່າວ ເປັນບ່ອນຖິ້ມຂີ້ເຫຍື້ອ;
3. ຫາກພົບເຫັນການລະເມີດກົດໝາຍ ແລະ ລະບຽບການ ໃຫ້ເຈົ້າໜ້າທີ່ປົກປ້ອງຜູ້ຊົມໃຊ້ ແລະ ກວດກາການຄ້າ ນຳໃຊ້ມາດຕະການຕໍ່ຜູ້ລະເມີດ ຕາມແຕ່ກໍລະນີ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ;
4. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ສະຫຼຸບ, ລາຍງານຜົນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ຕໍ່ກົມການຄ້າພາຍໃນ (ພະແນກປົກປ້ອງຜູ້ຊົມໃຊ້) ເປັນແຕ່ລະໄລຍະ.

ດັ່ງນັ້ນ, ຈຶ່ງແຈ້ງການມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການນີ້ ຢ່າງເຂັ້ມງວດ.

**ຫົວໜ້າຫ້ອງການ**

**ທ.ບານສະຕິ ເທບພະວົງ**

**ພະແນກປົກປ້ອງ ຜູ້ຊົມໃຊ້ ກົມການຄ້າພາຍໃນ:**
**021 417435, 96169966**